**ຄຳຮ້ອງຂໍການຍ້າຍສຸກເສີນ ສຳລັບຜູ້ເຄາະຮ້າຍສະເພາະຈາກ ຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບ ຊູ້ສາວ, ການລ່ວງລະເມີດທາງ ເພດ ຫຼື ການຕິດຕາມກໍ່ກວນ**

**ກະຊວງທີ່ຢູ່ອາໄສ ແລະ ການພັດທະ ນາຕົວເມືອງຂອງສະຫະລັດ**

ການອະນຸມັດ OMB ເລກທີ 2577-0286
ໝົດອາຍຸ 30/06/2017

**ຈຸດປະສົງຂອງແບບຟອມ:** ຖ້າທ່ານແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ແລະ ທ່ານກຳລັງຊອກຫາການຍ້າຍສຸກເສີນ, ທ່ານອາດຈະໃຊ້ແບບຟອມນີ້ເພື່ອຮ້ອງຂໍການຍ້າຍສຸກເສີນ ແລະ ຢັ້ງຢືນວ່າທ່ານຕອບສະໜອງໄດ້ຂໍ້ກຳນົດຂອງການມີສິດໄດ້ຮັບການຍ້າຍສຸກເສີນພາຍໃຕ້ກົດໝາຍວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງ (VAWA) ເຖິງແມ່ນວ່າຊື່ກົດໝາຍຈະອ້າງເຖິງແມ່ຍິງ, ແຕ່ສິດທິ ແລະ ການປົກປ້ອງຕາມກົດໝາຍ VAWA ນຳໃຊ້ກັບຜູ້ເຄາະຮ້າຍທຸກຄົນຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ. ການໃຊ້ແບບຟອມນີ້ບໍ່ຈຳເປັນຕ້ອງໝາຍເຖິງວ່າທ່ານຈະໄດ້ຮັບການຍ້າຍສຸກເສີນສະເໝີໄປ ເບິ່ງແຜນການຍ້າຍສຸກເສີນຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການມີໃຫ້ຂອງການຍ້າຍສຸກເສີນ

**<u>ຂໍ້ກຳນົດທີ່ທ່ານຕ້ອງຕອບສະໜອງໄດ້ມີຄື:</u>**

**(1) ທ່ານແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ** ຖ້າຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານບໍ່ທັນມີເອກະສານທີ່ຢັ້ງຢືນວ່າທ່ານແມ່ນຜູ້ເຄາະຮ້າຍຈາກຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ, ຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານອາດຈະຖາມເອົາເອກະສານດັ່ງກ່າວ ໂດຍຕອບສະໜອງຄືນ, ທ່ານສາມາດສົ່ງແບບຟອມ HUD-5382 ຫຼື ເອກະສານອື່ນອັນໃດກໍຕາມທີ່ລະບຸໄວ້ໃນແບບຟອມນັ້ນ

**(2) ທ່ານຮ້ອງຂໍເອົາການຍ້າຍສຸກເສີນຢ່າງຈະແຈ້ງ** ການສົ່ງແບບຟອມນີ້ຢືນຢັນວ່າທ່ານໄດ້ຮ້ອງຂໍເອົາການຍ້າຍຢ່າງຈະແຈ້ງ ຜູ້ໃຫ້ບໍລິການທີ່ຢູ່ອາໄສອາດຈະເລືອກຮຽກຮ້ອງໃຫ້ທ່ານສົ່ງແບບຟອມນີ້ ຫຼື ອາດຈະຍອມຮັບຄຳຮ້ອງຂໍເປັນລາຍລັກອັກສອນ ຫຼື ແບບປາກເປົ່າອື່ນກໍໄດ້ ກະລຸນາເບິ່ງລາຍລະອຽດເພີ່ມເຕີມໃນແຜນການຍ້າຍສຸກເສີນຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສຂອງທ່ານ

**(3) ທ່ານເຊື່ອຢ່າງມີເຫດຜົນວ່າທ່ານມີໄພອັນຕະລາຍທີ່ກຳລັງຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າຫາກທ່ານຍັງຄົງຢູ່ໃນເຮືອນເຊົ່າ ຫຼື ບ່ອນຢູ່ປັດຈຸບັນນັ້ນ** ນີ້ໝາຍຄວາມວ່າທ່ານມີເຫດຜົນໃຫ້ຢ້ານວ່າຖ້າຫາກທ່ານບໍ່ໄດ້ຍ້າຍອອກ ທ່ານອາດຈະປະສົບກັບຄວາມຮຸນແຮງໃນອະນາຄົດອັນໃກ້ໆ

**ຫຼື**

**ທ່ານແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດ ແລະ ການລ່ວງລະເມີດເກີດຂຶ້ນໃນສະຖານທີ່ນັ້ນໃນລະຫວ່າງໄລຍະ 90 ວັນຕາມເວລາປະຕິທິນກ່ອນທີ່ທ່ານຈະຮ້ອງຂໍການຍ້າຍ** ຖ້າທ່ານແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດ, ນອກຈາກການມີສິດໄດ້ຮັບການຍ້າຍສຸກເສີນເນື່ອງຈາກທ່ານເຊື່ອຢ່າງມີເຫດຜົນວ່າທ່ານມີໄພອັນຕະລາຍທີ່ຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າທ່ານຍັງຄົງຢູ່ໃນເຮືອນເຊົ່າຫຼືບ່ອນຢູ່ຂອງທ່ານ, ທ່ານອາດຈະມີສິດໄດ້ຮັບການຍ້າຍສຸກເສີນຖ້າການລ່ວງລະເມີດທາງເພດເກີດຂຶ້ນໃນສະຖານທີ່ອະສັງຫາລິມະຊັບທີ່ທ່ານກຳລັງຮ້ອງຂໍການຍ້າຍຂອງທ່ານ ແລະ ການລ່ວງລະເມີດນັ້ນໄດ້ເກີດຂຶ້ນພາຍໃນໄລຍະ 90 ວັນຕາມເວລາປະຕິທິນກ່ອນທີ່ທ່ານຈະສົ່ງແບບຟອມນີ້ ຫຼື ຮ້ອງຂໍການຍ້າຍຢ່າງຈະແຈ້ງໃນຮູບແບບອື່ນ

**ການສົ່ງເອກະສານ:** ຖ້າທ່ານມີເອກະສານຈາກພາກສ່ວນທີສາມທີ່ສະແດງໃຫ້ເຫັນວ່າຍ້ອນຫຍັງທ່ານຈຶ່ງມີສິດໄດ້ຮັບການຍ້າຍສຸກເສີນ, ທ່ານຄວນສົ່ງເອກະສານນັ້ນຫາຜູ້ໃຫ້ບໍລິຫານທີ່ຢູ່ອາໄສຂອງທ່ານຖ້າມັນປອດໄພໃນການເຮັດສິ່ງນັ້ນ ຕົວຢ່າງຂອງເອກະສານຈາກພາກສ່ວນທີສາມລວມມີ ແຕ່ບໍ່ຈຳກັດ: ຈົດໝາຍ ຫຼື ເອກະສານອື່ນຈາກຜູ້ໃຫ້ບໍລິການຜູ້ເຄາະຮ້າຍ, ພະນັກງານສັງຄົມສົງເຄາະ, ຜູ້ໃຫ້ການຊ່ວຍເຫຼືອທາງກົດໝາຍ, ຜູ້ໃຫ້ຄຳປຶກສາທີ່ເປັນຄຸນພໍ່, ຜູ້ໃຫ້ບໍລິການສຸຂະພາບຈິດ ຫຼື ຜູ້ຊ່ຽວຊານອື່ນທີ່ທ່ານໄດ້ຮ້ອງຂໍການຊ່ວຍເຫຼືອຈາກ; ຄຳສັ່ງຍັບຍັ້ງໃນປັດຈຸບັນ, ຄຳສັ່ງສານຫຼ້າສຸດ ຫຼື ບັນທຶກອື່ນຂອງສານ; ລາຍງານ ຫຼື ບັນທຶກການບັງຄັບໃຊ້ກົດໝາຍ; ບັນທຶກການສື່ສານຈາກຜູ້ກະທຳຄວາມຮຸນແຮງ ຫຼື ສະມາຊິກໃນຄອບຄົວ ຫຼື ໝູ່ເພື່ອນຂອງຜູ້ກະທຳຄວາມຮຸນແຮງ ລວມທັງອີເມວ, ຂໍ້ຄວາມສຽງ, ຂໍ້ຄວາມອັກສອນ ແລະ ໂພສຈາກສື່ສັງຄົມອອນລາຍ

**ການຮັກສາຄວາມລັບ:** ທຸກຂໍ້ມູນທີ່ສະໜອງໃຫ້ແກ່ຜູ້ໃຫ້ບໍລິການທີ່ຢູ່ອາໄສກ່ຽວກັບເຫດການຄວາມຮຸນແຮງໃນຄອບຄົວ, ຄວາມຮຸນແຮງໃນການນັດພົບຊູ້ສາວ, ການລ່ວງລະເມີດທາງເພດ ຫຼື ການຕິດຕາມກໍ່ກວນ ແລະ ກ່ຽວກັບຄຳຮ້ອງຂໍການຍ້າຍສຸກເສີນຂອງທ່ານຈະຕ້ອງຖືກຮັກສາໄວ້ເປັນຄວາມລັບ ລາຍລະອຽດດັ່ງກ່າວບໍ່ຄວນຖືກປ້ອນເຂົ້າຖານຂໍ້ມູນໃດໆ ທີ່ໃຊ້ຮ່ວມກັນ ພະນັກງານຂອງຜູ້ໃຫ້ບໍລິການທີ່ຢູ່ອາໄສຕ້ອງບໍ່ມີການເຂົ້າເຖິງລາຍລະອຽດເຫຼົ່ານີ້ ຍົກເວັ້ນເພື່ອໃຫ້ ຫຼື ເພື່ອປະຕິເສດການປົກປ້ອງຕາມກົດໝາຍ VAWA ຫຼື ການຍ້າຍສຸກເສີນແກ່ທ່ານ ພະນັກງານດັ່ງກ່າວບໍ່ສາມາດເປີດເຜີຍຂໍ້ມູນນີ້ແກ່ບຸກຄົນ ຫຼື ນິຕິບຸກຄົນອື່ນໃດໆ ຍົກເວັ້ນໃນຂອບເຂດທີ່ການເປີດເຜີຍນັ້ນແມ່ນ: (i) ໄດ້ຮັບການຍິນຍອມເຫັນດີຈາກທ່ານເປັນລາຍລັກອັກສອນໃນການເປີດເຜີຍທີ່ຈຳກັດເວລາ; (ii) ຈຳເປັນເພື່ອໃຊ້ໃນການດຳເນີນຄະດີເລື່ອງການໄລ່ອອກຈາກບ່ອນເຊົ່າ ຫຼື ການໄຕ່ສວນກ່ຽວກັບການຍຸດເຊົາການຊ່ວຍເຫຼືອ; ຫຼື (iii) ຕາມການກຳນົດໄວ້ໂດຍກົດໝາຍທີ່ນຳໃຊ້

**<u>ຕ້ອງປະກອບຂໍ້ມູນໂດຍ ຫຼື ໃນນາມຕາງໜ້າໃຫ້ບຸກຄົນທີ່ຮ້ອງຂໍການຍ້າຍ</u>**

**1. ຊື່ຂອງຜູ້ເຄາະຮ້າຍທີ່ຮ້ອງຂໍການຍ້າຍສຸກເສີນ:** ______________________________

**2. ຊື່ຂອງທ່ານ (ຖ້າແຕກຕ່າງຈາກຊື່ຂອງຜູ້ເຄາະຮ້າຍ)**______________________________

**3. ຊື່ຂອງສະມາຊິກຄອບຄົວອື່ນທີ່ມີຊື່ໃນສັນຍາເຊົ່າ:**______________________________

______________________________________________________

**4. ຊື່ຂອງສະມາຊິກຄອບຄົວອື່ນຜູ້ທີ່ຈະຍ້າຍໄປນຳຜູ້ເຄາະຮ້າຍ:**________________________

______________________________________________________

**5. ທີ່ຢູ່ຂອງສະຖານທີ່ທີ່ຜູ້ເຄາະຮ້າຍຮ້ອງຂໍຍ້າຍໄປ:** ______________________________

**6. ທີ່ຢູ່ ຫຼື ເບີໂທລະສັບສຳລັບຕິດຕໍ່ຫາຜູ້ເຄາະຮ້າຍ:**______________________________

**7. ຊື່ຂອງຜູ້ກະທຳຜິດທີ່ຖືກກ່າວຫາ (ຖ້າຮູ້ຈັກ ແລະ ສາມາດເປີດເຜີຍໄດ້ຢ່າງປອດໄພ):**____________

**8. ຄວາມສຳພັນຂອງຜູ້ກະທຳຜິດທີ່ຖືກກ່າວຫາກັບຜູ້ເຄາະຮ້າຍ:**______________________

**9. ວັນທີ, ເວລາ ແລະ ສະຖານທີ່ຂອງເຫດການ:**______________________________

______________________________________________________

**10. ບຸກຄົນທີ່ຮ້ອງຂໍການຍ້າຍແມ່ນຜູ້ເຄາະຮ້າຍຈາກການລ່ວງລະເມີດທາງເພດທີ່ເກີດຂຶ້ນພາຍໃນ 90 ວັນຜ່ານມາຢູ່ໃນສະຖານທີ່ຂອງອະສັງຫາລິມະຊັບທີ່ຜູ້ເຄາະຮ້າຍກຳລັງຂໍເອົາການຍ້າຍແມ່ນຫຼືບໍ່? ຖ້າແມ່ນ, ໃຫ້ຂ້າມຄຳຖາມ 11. ຖ້າບໍ່ແມ່ນ, ໃຫ້ຕອບຄຳຖາມ 11.** ______________

**11. ອະທິບາຍຍ້ອນຫຍັງຜູ້ເຄາະຮ້າຍຈຶ່ງເຊື່ອຢ່າງມີເຫດຜົນວ່າຕົນເອງມີໄພອັນຕະລາຍທີ່ກຳລັງຈະເກີດຂຶ້ນຈາກຄວາມຮຸນແຮງເພີ່ມເຕີມຖ້າເຂົາເຈົ້າຍັງຄົງຢູ່ໃນຫ້ອງເຊົ່າ ຫຼື ບ່ອນຢູ່ໃນປັດຈຸບັນນັ້ນຕໍ່ໄປ**

________________________________________________________________

________________________________________________________________

**12. ຖ້າສະໝັກໃຈສະໜອງໃຫ້, ຈົ່ງລະບຸເອກະສານຈາກພາກສ່ວນທີສາມທີ່ທ່ານກຳລັງສະໜອງໃຫ້ພ້ອມກັບແຈ້ງການນີ້:** ______________________________________________________

ນີ້ເພື່ອຢັ້ງຢືນວ່າຂໍ້ມູນທີ່ສະໜອງໃຫ້ໃນແບບຟອມນີ້ແມ່ນເປັນຈິງແທ້ ແລະ ຖືກຕ້ອງອີງຕາມຄວາມຮັບຮູ້ຂອງຂ້າພະເຈົ້າ ແລະ ບຸກຄົນທີ່ມີຊື່ຂ້າງເທິງໃນຂໍ້ 1 ຕອບສະໜອງໄດ້ຂໍ້ກຳນົດທີ່ວາງໄວ້ໃນແບບຟອມນີ້ສຳລັບການຍ້າຍສຸກເສີນ. ຂ້າພະເຈົ້າຮັບຮູ້ວ່າການໃຫ້ຂໍ້ມູນທີ່ບໍ່ເປັນຈິງສາມາດມີຜົນເສຍຫາຍຕໍ່ກັບການມີສິດເຂົ້າຮ່ວມໂຄງການ ແລະ ສາມາດເປັນພື້ນຖານສຳລັບການປະຕິເສດການເຂົ້າຢູ່, ການຢຸດເຊົາການຊ່ວຍເຫຼືອ ຫຼື ການໄລ່ອອກໄດ້

ລາຍເຊັນ ____________________________ເຊັນໃນ (ວັນທີ) ________________________